ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 21 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 27 OCT 2014

ສຳນັກງານ ຄຄຊ
ເລື່ອງ ເລກທີ 169
ວັນທີ 28.10.14
ໂທລະສັບ 021 217770

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 09/2014 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I

## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ; ປະຕິບັດລະບອບການສ່ອງແສງລາຍງານ ແລະ ການດຳເນີນຊີວິດການເມືອງພາຍໃນພັກ, ກົມກອງ ແລະ ອົງການຈັດຕັ້ງມະຫາຊົນ ປະຈຳເດືອນ ເພື່ອກວດກາຕີລາຄາຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ໃນເດືອນຜ່ານມາໄດ້ມີບາງເຫດການພົ້ນເດັ່ນຄື: ❶ ສຳເລັດກອງປະຊຸມສະພາບໍລິຫານ ທຫລ ສະໄໝສາມັນ ເທື່ອທີ I ປະຈຳປີ 2014; ❷ສຳເລັດກອງປະຊຸມສ່ອງແສງວຽກງານສາຍພັກ ແລະ ສາຍລັດ ປະຈຳເດືອນ 9/2014 ແລະ ❸ສຳເລັດກອງປະຊຸມເຜີຍແຜ່ດຳລັດວ່າດ້ວຍການແຈ້ງຊັບສິນ ແລະ ລາຍຮັບໃຫ້ແກ່ພະນັກງານ ທຫລ ເທື່ອທີ IV. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສະພາບການເມືອງແນວຄິດ ຂອງພະນັກງານພາຍໃນຂະແໜງທະນາຄານ ມີຄວາມ ສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ້ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານທີ່ລັດຖະບານມອບໝາຍໃຫ້

- ສຳເລັດການຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມຜົນຂອງກອງປະຊຸມແບບຊ່ອງໜ້າທີ່ ສປປ ລາວ ໄດ້ເຂົ້າຮ່ວມໃນລະຫວ່າງວັນທີ 03-05/09/52014 ທີ່ຊຽມຣຽບ ປະເທດກຳປູເຈຍ;
- ກະກຽມແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາຂອງ ສປປ ລາວ ສຳລັບປີ 2016-2030 ໃຫ້ແກ່ຫ້ອງວ່າການລັດຖະບານ;
- ກະກຽມນຳສົ່ງບົດສະຫຼຸບການຈັດຕັ້ງປະຕິບັດແຜນເງິນຕາກາງສົກປີ 2013-2014 ໃຫ້ແກ່ຫ້ອງວ່າການລັດຖະບານ.

### III. ວຽກງານພົ້ນເດັ່ນ

- ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ❶ສຳເລັດການອອກໃບອະນຸຍາດສ້າງຕັ້ງຊົ່ວຄາວໃຫ້ແກ່ທະນາຄານເພີສແບັງ ຈຳກັດ; ອອກໃບອະນຸຍາດສ້າງຕັ້ງສະບັບໃໝ່ປ່ຽນແທນໃຫ້ແກ່ທະນາຄານ ເອແອັນແຊັດ (ລາວ) ຈຳກັດ; ❷ສຳເລັດການອອກແຈ້ງການເຕືອນບັນດາໂຮງຊວດຈຳທີ່ດຳເນີນທຸລະກິດບໍ່ສອດຄ່ອງກັບ ດຳລັດວ່າດ້ວຍໂຮງຊວດຈຳ; ❸ສຳເລັດການອອກແຈ້ງການເຖິງທະນາຄານທຸລະກິດທີ່ວລະບົບ ກ່ຽວກັບການນຳໃຊ້ແບບຟອມຂໍໂອນເງິນໄປຕ່າງປະເທດ;
- ສຳເລັດການນຳສົ່ງສຳນວນທຸລະກຳທາງດ້ານການເງິນທີ່ສົງໄສວ່າເປັນການຟອກເງິນ ໃຫ້ແກ່ເຈົ້າໜ້າທີ່ສືບສວນ-ສອບສວນ 01 ສະບັບ. ພ້ອມນີ້, ໃນເດືອນ 8/2014 ໄດ້ຮັບສຳນວນທຸລະກຳທາງດ້ານການເງິນທີ່ສົງໄສວ່າເປັນການຟອກ

- ສຳເລັດການຈັດກອງປະຊຸມຕ່າງໆດັ່ງນີ້: (1) ສຳເລັດການຈັດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ສະໄໝສາມັນ ເທື່ອທີ I ປະຈຳປີ 2014; (2) ຈັດກອງປະຊຸມການສົ່ງເສີມການຮ່ວມມື ລະຫວ່າງ ທະນາຄານທຸລະກິດລາວ ແລະ ທະນາຄານທຸລະກິດໄທ ຄັ້ງທີ III; (3) ກອງປະຊຸມເຜີຍແຜ່ "ກົດໝາຍວ່າດ້ວຍຫຼັກຊັບ" ຢູ່ຄະນະຈັດຕັ້ງສູນກາງ, ກະຊວງການຕ່າງປະເທດ, ຄະນະພົວພັນຕ່າງປະເທດສູນກາງພັກ, ກະຊວງປ້ອງກັນຄວາມສະຫງົບ ແລະ ຢູ່ 2 ແຂວງພາກເໜືອ ຄື: ແຂວງຫຼວງພະບາງ ແລະ ແຂວງໄຊຍະບູລີ; (4) ກອງປະຊຸມເຜີຍແຜ່ດຳລັດວ່າດ້ວຍການແຈ້ງຊັບສິນ ແລະ ການຈັດຕັ້ງປະຕິບັດວຽກງານການແຈ້ງຊັບສິນ ແລະ ລາຍຮັບ ຂອງພະນັກງານທະນາຄານແຫ່ງ ສປປ ລາວ ຄັ້ງທີ IV.

## IV. ວຽກງານວິຊາສະເພາະ

### 1. ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ

#### 1.1. ສະພາບເສດຖະກິດເງິນຕາສາກົນ

ເພື່ອເຮັດໃຫ້ເສດຖະກິດໂລກມີທ່າອ່ຽງດີຂຶ້ນ ຫຼາຍປະເທດໄດ້ສືບຕໍ່ປະຕິບັດນະໂຍບາຍຜ່ອນຖາຍ ໂດຍສະເພາະແມ່ນ ສ. ອາເມລິກາ ໄດ້ສືບຕໍ່ຮັກສາອັດຕາດອກເບ້ຍໄລຍະສັ້ນໃນລະດັບເກົ່າ ຄື: 0%-0,25%, ສ່ວນກຸ່ມປະເທດໃນຂົງເຂດເອີຣົບ ປັບຫລຸດອັດຕາດອກເບ້ຍພື້ນຖານຈາກລະດັບ 0,15% ມາເປັນ 0,05% ພ້ອມທັງປັບຫຼຸດອັດຕາດອກເບ້ຍເງິນຝາກຂັ້ນຕໍ່າຈາກລະດັບ -0,1% ມາເປັນ -0,20%, ສປ. ຈີນ ໄດ້ອັດສີດເງິນເຂົ້າສູ່ຂອດຈໍລະຈອນ ເພີ່ມຂຶ້ນ 81,4 ຕື້ໂດລາສະຫະລັດດ້ວຍການປ່ອຍກູ້ຜ່ານລະບົບທະນາຄານ. ເຖິງຢ່າງໃດກໍຕາມ ສ. ອາເມລິກາ ໄດ້ປະຕິບັດນະໂຍບາຍກະຕຸ້ນເສດຖະກິດ (QE) ຫຼຸດລົງ ແລະ ຄາດວ່າຈະຢຸດຕິມາດຕະການດັ່ງກ່າວໃນເດືອນຕຸລາ 2014 ຍ້ອນອັດຕາວ່າງງານຫຼຸດລົງຢູ່ໃນລະດັບ 6,1% ຊຶ່ງຕໍ່າກ່ວາເປົ້າໝາຍທີ່ກຳນົດໄວ້ ຄື: 7%.

#### 1.2. ການຮັກສາສະຖຽນລະພາບເງິນຕາພາຍໃນ

ໂດຍອີງໃສ່ສະພາບເສດຖະກິດເງິນຕາສາກົນ, ທະນາຄານແຫ່ງສປປລາວ ໄດ້ກຳນົດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມອັດຕາເງິນເຟີ້ ແລະອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້ດັ່ງລາຍລະອຽດ ລຸ່ມນີ້:

ຖານເງິນຕາປະຈຳເດືອນ 9/2014 (ຕົວເລກເບື້ອງຕົ້ນ) ເພີ່ມຂຶ້ນ 3,71% ເມື່ອທຽບໃສ່ເດືອນຜ່ານມາ ແລະ ປະລິມານເງິນ $M_2$ ເພີ່ມຂຶ້ນ 1,90% ເມື່ອທຽບໃສ່ເດືອນຜ່ານມາ.

ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 09/2014 ທຽບໃສ່ເດືອນ 08/2014 ເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າ 0,02% ແຕ່ເງິນກີບທຽບໃສ່ເງິນບາດອ່ອນຄ່າ 0,21%.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 1)**

ສະພາບການຊື້-ຂາຍເງິນຕາຕ່າງປະເທດ ໃນເດືອນ 9/2014 ໂດຍລວມແມ່ນປະລິມານ ຄວາມຕ້ອງການຫລາຍກວ່າການສະໜອງເພາະ ທທກ ໄດ້ຂາຍສຸດທິ 21,52 ລ້ານໂດລາທຽບເທົ່າ (ໃນນີ້: ຊື້ໂດລາສຸດທິ 36,04 ລ້ານໂດລາ ແຕ່ຂາຍເງິນບາດສຸດທິ 1,849,28 ລ້ານບາດ). ສະນັ້ນ, ທຫລ ຈຶ່ງໄດ້ດັດສົມຕະຫລາດເງິນຕາຕ່າງປະເທດດ້ວຍການຂາຍສຸດທິ 27 ລ້ານໂດລາທຽບເທົ່າ (ໃນນີ້: ຊື້ໂດລາສຸດທິ 1,2 ລ້ານໂດລາ ແຕ່ຂາຍເງິນບາດສຸດທິ 915 ລ້ານບາດ).

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 2)**

ອັດຕາເງິນເຟີ້ປະຈຳເດືອນ 09/2014 ຢູ່ໃນລະດັບ 3% ຫຼຸດລົງ 0,62% ຈາກ 3,62% ໃນເດືອນ 8/2014.

### 2. ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມການນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ບໍລິສັດລົງທຶນຈາກຕ່າງປະເທດ ກູ້ຢືມເງິນລົງທຶນຈາກຕ່າງປະເທດ ຈຳນວນ 4 ບໍລິສັດ ເປັນເງິນ 651,04 ລ້ານໂດລາສະຫະລັດທຽບເທົ່າ ແລະ ອະນຸຍາດໃຫ້ເປີດບັນຊີຢູ່ຕ່າງປະເທດ ຈຳນວນ 2 ບໍລິສັດ.

## 3. ການລະດົມເງິນຝາກ, ປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ[4]

ການລະດົມເງິນຝາກຮອດວັນທີ 19/9/2014 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 41.191,62 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 2,34%. ໃນນັ້ນ, ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 3,51% ກວມເອົາ 51,70% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດເພີ່ມຂຶ້ນ 1,11% ກວມເອົາ 48,30% ຂອງເງິນຝາກທັງໝົດ.

ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ (ບໍ່ລວມທະນາຄານນະໂຍບາຍ) ຮອດວັນທີ 19/9/2014 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 38.856,11 ຕື້ກີບ ເພີ່ມຂຶ້ນ 0,88% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນຕາຕ່າງປະເທດກວມເອົາ 48,21% ຂອງສິນເຊື່ອທັງໝົດ.

ໃນເດືອນ 9/2014 ທະນາຄານນະໂຍບາຍປ່ອຍສິນເຊື່ອໄດ້ 85,79 ຕື້ກີບ ຫຼຸດລົງ 40,73% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້: ສິນເຊື່ອ 68 ເມືອງທຸກຍາກ ມີຈຳນວນ 57,5 ຕື້ກີບ, ສິນເຊື່ອ 64 ຈຸດສຸມ ມີຈຳນວນ 8,32 ຕື້ກີບ, ສິນເຊື່ອ 3 ສ້າງ ມີຈຳນວນ 19,97 ຕື້ກີບ ເພີ່ມຂຶ້ນ 36,03% ເມື່ອທຽບໃສ່ເດືອນຜ່ານມາ ແລະ ເກັບໜີ້ໄດ້ 32,74 ຕື້ກີບມີ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງ ການກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 8/2014 ມີ ຈານວນ 2.528,85 ຕື້ກີບ ເພີ່ມຂຶ້ນ 15,67% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 5,21% ຂອງຍອດເຫຼືອສິນເຊື່ອທັງໝົດ. ສາເຫດທີ່ໜີ້ບໍ່ເກີດດອກອອກຜົນເພີ່ມຂຶ້ນຍ້ອນທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ ມີຍອດເຫຼືອໜີ້ບໍ່ເກີດດອກອອກຜົນເພີ່ມຂຶ້ນ ຄື: 227,55 ຕື້ກີບ ແລະ 166,04 ຕື້ກີບ ຕາມລຳດັບ.

## 4. ການເຄື່ອນໄຫວຊຳລະສະສາງ ແລະການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 3.402 ສະບັບ ເພີ່ມຂຶ້ນ 0,91% ເປັນເງິນຈຳນວນ 2.191,85 ຕື້ກີບ ເພີ່ມຂຶ້ນ 8,66% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 25 ຄັ້ງ ມີມູນຄ່າການໂອນ 89,05 ຕື້ກີບ ຫຼຸດລົງ 64,81% ເມື່ອທຽບໃສ່ເດືອນຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 29/08-27/09/2014 ມີການເຄື່ອນໄຫວຈຳນວນ 3.372 ຄັ້ງ ມີມູນຄ່າ 970,6 ຕື້ກີບ ເພີ່ມຂຶ້ນ 22,85% ເມື່ອທຽບໃສ່ເດືອນຜ່ານມາ. ທະນາຄານທຸລະກິດທີ່ເຮັດທຸລະກຳສູງສຸດ ຄື: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 1.229 ຄັ້ງ.

### 4.2 ການຊື້-ຂາຍພັນທະບັດ

ໃນເດືອນ 9/2014 ໄດ້ຈຳໜ່າຍພັນທະບັດກະຊວງການເງິນ ບ້ວງ 1.000 ຕື້ກີບ (ຂາຍຜ່ານ ທຫລ) ໃຫ້ທະນາຄານທຸລະກິດ ຈຳນວນ 97 ຕື້ກີບ, ໄຖ່ຖອນພັນທະບັດບ້ວງລະດົມທຶນຂາຍໂດຍກົງໃຫ້ທະນາຄານທຸລະກິດ ຈຳນວນ 50 ຕື້ກີບ. ປັດຈຸບັນມີພັນທະບັດທີ່ຍັງບໍ່ທັນຄົບກຳນົດໄຖ່ຖອນທັງໝົດ 4 ບ້ວງ ມີມູນຄ່າ 5.821,39 ຕື້ກີບ ແລະ 70 ລ້ານໂດລາ.

ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 9/2014 ມີການໄຖ່ຖອນຕົ້ນທຶນພັນທະບັດ ຈຳນວນ 3 ຕື້ກີບ; ມີການຊຳລະດອກເບ້ຍພັນທະບັດ ຈຳນວນ 97,50 ລ້ານກີບ ແລະ 0,22 ລ້ານໂດລາ. ນັບແຕ່ປີ 2008 ຮອດເດືອນ 9/2014 ທຫລ ມີຍອດລວມການຈຳໜ່າຍພັນທະບັດທັງໝົດ ຈຳນວນ 10.381,06 ຕື້ກີບ ແລະ 696,68 ລ້ານໂດລາ; ໂດຍມີການໄຖ່ຖອນຄືນແລ້ວ ຈຳນວນ 9.915,66 ຕື້ກີບ ແລະ 534,48 ລ້ານໂດລາ ແລະ ຈຳນວນທີ່ຍັງບໍ່ທັນມີການໄຖ່ຖອນ 53 ຕື້ກີບ ແລະ 162,20 ລ້ານໂດລາ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດສະນີຕະຫຼາດຫຼັກຊັບລາວໃນເດືອນນີ້ ປິດຢູ່ທີ່ 1.427,72 ຈຸດ ຫຼຸດລົງ 0,56% ເມື່ອທຽບໃສ່ເດືອນຜ່ານມາ. ໃນເດືອນນີ້ມີປະລິມານຊື້-ຂາຍຮຸ້ນທັງໝົດ 556.282 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4 ຕື້ກີບ ຫຼຸດລົງ 62,28% ທຽບໃສ່ເດືອນຜ່ານມາ, ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 41,86% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.830 ກີບ/ຮຸ້ນ ເພີ່ມຂຶ້ນ 20 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ມີປະລິມານຊື້-ຂາຍທັງໝົດ 114.356 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 895,39 ລ້ານກີບ ຫຼຸດລົງ 69,41% ເມື່ອທຽບໃສ່ເດືອນຜ່ານມາ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 40,41% ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 9,37%.

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.035 ກີບ/ຮຸ້ນ ເພີ່ມຂຶ້ນ 110 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ມີປະລິມານການຊື້-ຂາຍຮຸ້ນທັງໝົດ 441.426 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,10 ຕື້ກີບ ຫຼຸດລົງ 59,51% ເມື່ອທຽບໃສ່ເດືອນຜ່ານມາ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 46,75% ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,22%.

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.280 ກີບ/ຮຸ້ນ ຫຼຸດລົງ 862 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ມີປະລິມານຊື້-ຂາຍທັງໝົດ 500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,14 ລ້ານກີບ ຫຼຸດລົງ 80,69% ເມື່ອທຽບໃສ່ເດືອນຜ່ານມາ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 62,50% ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%.

## V. <u>ດ້ານອ່ອນແລະຂໍ້ຄົງຄ້າງ</u>

- ການສຶກສາອົບຮົມທາງດ້ານການເມືອງ-ແນວຄິດເຖິງແມ່ນວ່າໄດ້ດຳເນີນຢ່າງປົກກະຕິ ແຕ່ກໍ່ຍັງບໍ່ທັນເລິກເຊິ່ງ ແລະ ຍັງບໍ່ທັນເປັນປົກກະຕິເທົ່າທີ່ຄວນ;
- ການປະສານວຽກງານ ແລະ ການຈັດຕັ້ງປະຕິບັດບາງວຽກງານຍັງມີລັກສະນະຊັກຊ້າ ແລະ ບາງວຽກງານກໍ່ເປັນວຽກຮີບດ່ວນ;
- ພະນັກງານຈຳນວນໜຶ່ງຍັງເປັນພະນັກງານໜຸ່ມນ້ອຍ ຍັງຂາດຫົວຄິດປະດິດສ້າງ-ຄວາມຄິດສ້າງສັນໃນການເຮັດວຽກສ່ວນຫຼາຍແມ່ນປະຕິບັດຕາມຄຳສັ່ງ;
- ສະມາຊິກ 3 ອົງການຈັດຕັ້ງ ມະຫາຊົນ ຈຳນວນໜຶ່ງຍັງຂາດຄວາມເປັນເຈົ້າການ ໃນການເຂົ້າຮ່ວມຂະບວນການຕ່າງໆທີ່ກົມ ຫຼື ທຫລ ຈັດຂຶ້ນ.

ເພື່ອແກ້ໄຂບັນດາດ້ານອ່ອນ ແລະ ຂໍ້ຄົງຄ້າງຂ້າງເທິງນັ້ນບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ໄດ້ມີການຈັດກອງປະຊຸມສ່ອງແສງວຽກງານເປັນປະຈຳທຸກເດືອນ ເພື່ອຈັດຕັ້ງການນຳພາການເມືອງ-ແນວຄິດແກ່ພະນັກງານທຸກຂັ້ນ, ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບ, ບໍ່ສວຍໃຊ້ສິດອຳນາດຂອງຕົນ, ຮູ້ເສຍສະຫຼະຜົນປະໂຫຍດສ່ວນຕົວເພື່ອສ່ວນລວມ ເປັນຕົ້ນແມ່ນດ້ານສະຕິປັນຍາ, ເຫື່ອແຮງ ແລະ ເວລາ. ນອກຈາກນີ້, ຍັງໄດ້ສ້າງຂໍ້ແຂ່ງຂັນພາຍໃນ ທຫລ ເພື່ອໃຫ້ວຽກງານດຳເນີນໄດ້ຢ່າງຄ່ອງຕົວມີແບບແຜນ ແລະ ທັນກັບໄລຍະເວລາທີ່ກຳນົດ. ເອົາໃຈໃສ່ລະດົມສະມາຊິກ 3 ອົງການຈັດຕັ້ງມະຫາຊົນ ເຂົ້າຮ່ວມຂະບວນການຕ່າງໆ ຢ່າງເປັນປະຈຳ.

# ພາກທີ II

## ທິດທາງແຜນການໃນຕໍ່ໜ້າ

### I. ວຽກງານການເມືອງແນວຄິດ

ສືບຕໍ່ນຳພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ແຜນປະຕິບັດວຽກງານຈຸດສຸມພາຍໃນໃນຕໍ່ໜ້າ

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈຳລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໃຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ; ອັດຕາເງິນເຟີ້ໃນເດືອນ 10/2014 ຄາດວ່າຈະຢູ່ໃນລະດັບ 3,19%.
- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;
- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນໄຂໃຫ້ນຳໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນຳໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;
- ສືບຕໍ່ຄົ້ນຄວ້າ ແລະ ປັບປຸງບັນດານິຕິກຳທີ່ຕິດພັນກັບວຽກງານວິຊາສະເພາະຕ່າງໆໄດ້ແກ່: **(1)** ປັບປຸງຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ຕາມມະຕິຕົກລົງຂອງກອງປະຊຸມລັດຖະບານ ເພື່ອສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດພິຈາລະນາເອົາຮ່າງກົດໝາຍດັ່ງກ່າວ ເຂົ້າໃນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ໃນເດືອນ 12/2014; **(2)** ປັບປຸງຮ່າງດຳລັດວ່າດ້ວຍແຊັກ ຕາມຄຳເຫັນຂອງກອງປະຊຸມລັດຖະບານ ຊຶ່ງຢູ່ໃນຂັ້ນຕອນສະເໜີນາຍົກລັດຖະມົນຕີເຊັນຮັບຮອງ; **(3)** ຮ່າງດຳລັດວ່າດ້ວຍໂຮງຊວດຈຳ ຍັງຕິດຕາມນຳກະຊວງຍຸຕິທຳ; **(4)** ຮ່າງດຳລັດວ່າດ້ວຍລະບົບຊຳລະສະສາງແຫ່ງຊາດ; **(5)** ສືບຕໍ່ປັບປຸງເນື້ອໃນຮ່າງດຳລັດວ່າດ້ວຍທຸລະກິດໃຫ້ເຊົ່າສິນເຊື່ອ; **(6)** ປັບປຸງຮ່າງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ຕາມມະຕິຂອງກອງປະຊຸມສະພາບໍລິຫານຂອງ ທຫລ ໃນຄັ້ງວັນທີ 10 ກັນຍາ 2014; **(7)** ສືບຕໍ່ຜ່ານຂໍ້ຕົກລົງວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ; **(8)** ຮ່າງລະບຽບກ່ຽວກັບອັດຕາດອກເບ້ຍເງິນຝາກ-ເງິນກູ້ຂອງທະນາຄານທຸລະກິດ; **(9)** ຄົ້ນຄວ້າຮ່າງລະບຽບວ່າດ້ວຍການມອບຫຼັກຊັບຄ້ຳປະກັນຂອງລູກຄ້າ ເພື່ອຊຳລະໜີ້ເງິນກູ້ແກ່ທະນາຄານ; **(10)** ສືບຕໍ່ປັບປຸງລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນ (ສະບັບ

ເນື້ອໃນບາງມາດຕາ ແລະ ຄຳແນະນຳເພີ່ມເຕີມຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮສຳລັບໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 324/ທຫລ;

- ສືບຕໍ່ສັງລວມບັນດານິຕິກຳຂອງ ທຫລ ເພື່ອສົ່ງໃຫ້ກະຊວງຍຸຕິທຳ ລົງຈົດໝາຍເຫດທາງລັດຖະການ;
- ສືບຕໍ່ພັດທະນາລະບົບ HMR-PAYROLL ຂອງ ທຫລ ເພື່ອປັບປຸງໂມດູນການເບີກຈ່າຍເງິນເດືອນ;
- ວຽກງານຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ: **(1)** ສືບຕໍ່ຕິດຕາມພາຍຫຼັງໄດ້ນຳສົ່ງຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອກວດກາການປັບປຸງຮ່າງກົດໝາຍດັ່ງກ່າວ ກ່ອນນຳສະເໜີປະທານປະເທດອອກລັດຖະບັນຍັດປະກາດໃຊ້; **(2)** ສືບຕໍ່ຄົ້ນຄວ້າກ່ຽວກັບການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ; (3) ສືບຕໍ່ຄົ້ນຄວ້າ ແລະ ສັງລວມລາຍງານທຸລະກຳທີ່ມີລັກຊະນະພາໃຫ້ສົງໄສວ່າເປັນການຟອກເງິນຈາກທະນາຄານທຸລະກິດ ເພື່ອເຮັດການວິເຄາະ ແລະ ລາຍງານຂັ້ນເທິງ ແລະ ລາຍງານເຈົ້າໜ້າທີ່ສືບສວນສອບສວນ;
- ສືບຕໍ່ຈັດຕັ້ງປະຕິບັດວຽກງານການແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານທະນາຄານ;
- ສືບຕໍ່ປັບປຸງຮ່າງແຜນຍຸດທະສາດການພັດທະນາຂະແໜງທະນາຄານຂອງ ສປປ ລາວ 2016-2025 ແລະ ວິໄສທັດຮອດປີ 2030;
- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ.

ຜູ້ວ່າການທະນາຄານແຫ່ງສປປລາວ

ດຣ. ສົມພາວ ໄຟສິດ

## ຕາຕະລາງຄັດຕິດບົດລາຍງານ

### ຕາຕະລາງ ທີ 1: ສະພາບອັດຕາແລກປ່ຽນພາຍໃນ

| ອັດຕາ | ເດືອນຜ່ານມາ 21/7-20/8/2014 | | | ເດືອນນີ້ 21/8-20/9/2014 | | | % (+) ເງິນກີບແຂງ / (-) ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| +ໃນລະບົບ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ໂດລາ | 8.031,79 | 8.059,78 | 8.042,67 | 8.026,37 | 8.059,30 | 8.040,44 | 0,07% | 0,01% | 0,03% |
| ບາດ | 251,46 | 252,61 | 252,21 | 251,13 | 252,33 | 251,96 | 0,13% | 0,11% | 0,10% |
| +ນອກລະບົບ | | | | | | | | | |
| ໂດລາ | 8.037,01 | 8.076,24 | 8.056,62 | 8.034,72 | 8.075,50 | 8.055,11 | 0,03% | 0,01% | 0,02% |
| ບາດ | 252,05 | 253,36 | 252,70 | 251,68 | 252,68 | 252,18 | 0,15% | 0,27% | 0,21% |
| ຜິດດ່ຽງອັດຕາໃນລະບົບ ແລະນອກລະບົບ (%) | | | | | | | | | |
| -ໂດລາ | 0,07% | 0,20% | 0,17% | 0,10% | 0,20% | 0,18% | | | |
| -ບາດ | 0,23% | 0,30% | 0,20% | 0,22% | 0,14% | 0,09% | | | |

### ຕາຕະລາງ ທີ 2: ສະພາບການຊື້-ຂາຍເງິນຕາຕ່າງປະເທດ ປະຈຳເດືອນ 9/2014

| | ເດືອນ 08/2014 | | ເດືອນ 09/2014 | | (%) +ເພີ່ມຂຶ້ນ / -ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 87,60 | 787,79 | 74,18 | 667,43 | -15,32% | -15,28% |
| - ທ/ຄທຸລະກິດອື່ນໆ | 70,66 | 624,40 | 105,18 | 706,71 | 48,86% | 13,18% |
| ລວມຊື້: | **158,26** | **1.412,19** | **179,36** | **1.374,14** | **13,33%** | **-2,69%** |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 64,23 | 1.262,15 | 63,53 | 1.072,20 | -1,08% | -15,05% |
| - ທ/ຄທຸລະກິດອື່ນໆ | 57,21 | 1.463,05 | 70,39 | 2.340,93 | 23,04% | 60,00% |
| ລວມຂາຍ: | **121,44** | **2.725,21** | **133,93** | **3.413,13** | **10,28%** | **25,24%** |
| ທທກຊື້-ຂາຍສຸດທິ | **36,82** | **-1.313,02** | **45,44** | **-2.038,99** | **23,39%** | **55,29%** |
| % ຜິດດ່ຽງຊື້-ຂາຍ | **23,27** | **-92,98** | **25,33** | **-148,38** | **8,88%** | **59,59%** |
| ມູນຄ່າການຊື້-ຂາຍ | **279,70** | **4.137,39** | **313,29** | **4.787,27** | **12,01%** | **15,71%** |
| 3. ຊື້-ຂາຍລະຫວ່າງ ທຫລກັບ ທທກ | | | | | | |
| - ທຫລຊື້ຈາກທທກ | 2,16 | 11,99 | 18,36 | 0,00 | 749,23% | -100,00% |
| - ທຫລຂາຍໃຫ້ທທກ | 8,60 | 1.285,21 | 9,83 | 969,30 | 14,33% | -24,58% |
| ທຫລຊື້-ຂາຍສຸດທິ | **-6,44** | **-1.273,22** | **8,53** | **-969,30** | **-232,47%** | **-23,87%** |
| 4. ຊື້-ຂາຍລະຫວ່າງທທກດ້ວຍກັນ | **32,01** | **484,44** | **32,68** | **552,19** | **2,07%** | **13,98%** |
| 5. ຊື້-ຂາຍລະຫວ່າງທຫລກັບພາກສ່ວນອື່ນ (ກະຊວງການເງິນ ແລະ ຮ້ານແລກປ່ຽນເງິນຕາ) | | | | | | |
| - ທຫລຊື້ຈາກພາກສ່ວນອື່ນ | 3,52 | 0,22 | 11,89 | 0,13 | 237,60% | -42,37% |
| - ທຫລຂາຍໃຫ້ພາກສ່ວນອື່ນ | 0,28 | 0,00 | 0,25 | 18,00 | -11,89% | 0,00 |
| ທຫລຊື້-ຂາຍສຸດທິ | [illegible] | [illegible] | [illegible] | [illegible] | [illegible] | [illegible] |